ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------------

ແຂວງເຊກອງ
ພະແນກອຸດສາຫະກຳ ແລະ ການຄ້າ
ຄະນະກຳມະການປະມູນຊື້ - ຂາຍໄມ້ຢຶດ

ເລກທີ.021/ພອຄ.ຊກ
ເຊກອງ,ວັນທີ.12 ພຶດສະພາ 2020

# ແຈ້ງການ

**ເຖິງ:** ອຳນວຍການໂຮງງານປຸງແຕ່ງໄມ້ ແລະໂຮງງານເຟີເນີເຈີໄມ້ສຳເລັດຮູບພາຍໃນແຂວງ,ຕ່າງແຂວງ.

**ເລື່ອງ:** ເຊີນເຂົ້າຮ່ວມປະມູນຊື້ໄມ້ຢຶດຂອງລັດ ປະເພດໄມ້ໂລງເລ່ງແປຮູບ ຈຳນວນ 84,002 ມ$^3$ (ແປດສິບສີ່ ຈຸດ ສູນສູນສອງ ແມັດກ້ອນ).

-ອີງຕາມ: ຂໍ້ຕົກລົງຂອງລັດຖະມົນກະຊວງອຸດສາຫະກຳ ແລະ ການຄ້າ ,ສະບັບເລກທີ 0918/ອຄ.ກຈພງ ,ລົງວັນທີ 10 ກໍລະກົດ 2018:ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງພະແນກອຸດສາຫະກຳ ແລະ ການຄ້າແຂວງ,ນະຄອນຫຼວງ.

-ອີງຕາມ: ຄຳສັ່ງນາຍົກລັດຖະມົນຕີ ສະບັບເລກທີ: 17/ນຍ, ລົງວັນທີ: 22/9/2008. ກ່ຽວກັບການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງປ່າໄມ້ ແລະ ທຸລະກິດ.

-ອີງຕາມ: ຄຳສັ່ງແນະນຳຂອງ ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າສະບັບເລກທີ 0336/ອຄ.ກຂອ , ລົງວັນທີ.13 ມີນາ 2017.

ພະແນກອຸດສາຫະກຳ ແລະ ການຄ້າແຂວງ ເຊກອງ ໃນນາມ (ຄະນະກຳມະການປະມູນຊື້ - ຂາຍໄມ້ຢຶດຂັ້ນແຂວງ) ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານ ທຸລະກິດໄມ້, ໂຮງງານອຸດສາຫະກຳປຸງແຕ່ງໄມ້, ພາຍໃນແຂວງ ແລະ ຕ່າງແຂວງ ທີ່ວປະເທດ ເຂົ້າຮ່ວມປະມູນຊື້ໄມ້ຢຶດຂອງລັດ ທີ່ເຈົ້າໜ້າທີ່ລັດໄດ້ຢຶດຢູ່ໂຮງງານ ບ້ານງອນດອນ ເມືອງດາກຈຶງ ປະເພດໄມ້ໂລງເລ່ງ(ແປຮູບ) ຈຳນວນ **2.209 ຕັບ/ເສັ້ນ , ບໍລິມາດ 84,002 ມ$^3$,** (ແປດສິບສີ່ ຈຸດ ສູນສູນສອງ ແມັດກ້ອນ ) .

1. <u>ວ່າດ້ວຍເງື່ອນໄຂຜູ້ເຂົ້າຮ່ວມປະມູນ.</u>

1.1. ແມ່ນບໍລິສັດ/ໂຮງງານປຸງແຕ່ງໄມ້ທີ່ໄດ້ຜ່ານການດັດສົມ ແລະ ໄດ້ຮັບອະນຸຍາດດຳເນີນທຸລະກິດການຜະລິດປຸງແຕ່ງໄມ້ທີ່ຖືກຕ້ອງຕາມລະບຽບກົດໝາຍຂອງ ສປປລາວ .

1.2. ມີໃບທະບຽນວິສາຫະກິດ, ມີໃບທະບຽນອາກອນ, ມີໃບອະນຸຍາດດຳເນີນກິດຈະການທຸລະກິດໄມ້ ແລະ ໃບອະນຸຍາດອື່ນໆ ທີ່ຖືກຕ້ອງຕາມລະບຽບການ ແລະ ເປັນໂຮງງານທີ່ບໍ່ເຄີຍກະທຳຜິດດ້ານທຸລະກິດໄມ້, ບໍ່ເຄີຍມີໜີ້ສິນຄ້າງສຳລະພັນທະໄມ້ກັບພາກລັດ.

2. <u>ວ່າດ້ວຍຖານະການເງິນຂອງຜູ້ທີ່ເຂົ້າຮ່ວມການປະມູນ.</u>

2.1.ຕ້ອງມີບັນຊີເງິນສົດ, ເຊັກສົດໃນການສຳລະຄ່າພັນທະໄມ້ ໂດຍໄດ້ຮັບການຢັ້ງຢືນ ຈາກທະນາຄານໃດໜຶ່ງວ່າມີເງິນແທ້ ແລະ ສາມາດຖອນເງິນໄດ້.

2.2. ໃນການເຂົ້າຮ່ວມການປະມູນຊື້ໄມ້ຜູ້ເຂົ້າປະມູນຕ້ອງສົ່ງຊອງປະມູນມາຍັງຄະນະກຳມະການປະມູນຊື້ - ຂາຍໄມ້ຂັ້ນແຂວງຄື: ຊອງເງື່ອນໄຂ ແລະ ລາຄາປະມູນຊື້ໄມ້ຂອງໂຮງງານທີ່ເຂົ້າຮ່ວມການປະມູນ.

2.3. ໂຮງງານປຸງແຕ່ງໄມ້ ຫຼື ເຟີນີເຈີ ທີ່ຊະນະການປະມູນແມ່ນໃຫ້ປະສານສົມທົບກັບຄະນະກຳມະການປະມູນໄມ້ຂັ້ນແຂວງເພື່ອ,ຂໍພະນັກງານວິຊາການທີ່ກ່ຽວຂ້ອງຮ່ວມກັນລົງກວດກາໄມ້ຕົວຈິງ ຢູ່ສະໜາມ ແລ້ວມອບເງິນ 10% ເພື່ອຄ້ຳເພື່ອສັນຍາຊື້ - ຂາຍ ແລະ ຫຼັງຈາກນັ້ນຈຶ່ງປະກອບເອກະສານ ຕາມລະບຽບການປະມູນຂອງລັດ, ພ້ອມທັງສຳລະຄ່າພັນທະໄມ້ໃຫ້ສຳເລັດຕາມກຳນົດເວລາ. ຖ້າຜູ້ຊະນະການປະມູນບໍ່ສາມາດປະຕິ ບັດໄດ້ຕາມທີ່ກ່າວມາຂ້າງເທິງນັ້ນແມ່ນມອບໃຫ້ຜູ້ປະມູນທີ່ໄດ້ອັນດັບທີ 02 ຫຼືຜູ້ຖັດໄປ ເປັນຜູ້ຈັດຕັ້ງປະຕິບັດການເຊັນສັນຍາຊື້ - ຂາຍ ແລະ ມອບພັນທະໄມ້ແທນໂດຍບໍ່ມີການຕໍ່ລອງໃດໆທັງສິ້ນ.

2.4. ການປະມູນຊື້ - ຂາຍໄມ້ ແມ່ນໃຫ້ໃສ່ລາຄາປະມູນຊື້ຕາມລາຄາກາງທີ່ຄະນະກຳມະການໄດ້ກຳນົດໄວ້ໂດຍບໍ່ໃຫ້ເລືອກເອົາສະເພາະໄມ້ທີ່ທາງໂຮງງານຕ້ອງການຢ່າງເດັດຂາດ.

2.5. ໃນລາຄາປະມູນຂາຍໄມ້ ແມ່ນມີແຕ່ຄ່າພັນທະໄມ້ເທົ່ານັ້ນ ຍັງບໍ່ທັນໄດ້ບວກອາກອນຕ່າງໆ ເຂົ້ານຳ.

2.6. ລາຄາກາງໃນການປະມູນໄມ້ດັ່ງກ່າວ ແມ່ນກຳນົດຂຶ້ນເພື່ອເປັນການສົ່ງເສີມໃຫ້ນຳເອົາໄມ້ ໄປປຸງແຕ່ງເປັນຜະ ລິດຕະພັນສຳເລັດຮູບເພື່ອຈຳໜ່າຍພາຍໃນ ແລະ ສົ່ງອອກຕ່າງປະເທດ.

3. <u>ວ່າດ້ວຍວັນ, ເວລາ ແລະ ຄ່າຊອງປະມູນ.</u>

3.1. ກຳນົດເວລາຂາຍຊອງປະມູນໄມ້ເລີ່ມແຕ່ວັນທີ: 12 /05/ 2020 ເຖິງວັນທີ: 26/05/ 2020.

3.2. ກຳນົດເປີດຊອງປະມູນໄມ້ ເວລາ: 08:30 ໂມງຂອງວັນທີ: 27 /05/ 2020.

3.3. ສະຖານທີ່: ຫ້ອງປະຊຸມພະແນກ ອຸດສາຫະກຳ ແລະ ການຄ້າ ແຂວງເຊກອງ.

3.4. ສຳລັບຊອງປະມູນໃຫ້ພົວພັນຊື້ໄດ້ທີ່ພະແນກອຸດສາຫະກຳ ແລະ ການຄ້າ(ຂະແໜງການນຳເຂົ້າ ແລະ ສົ່ງອອກສິນຄ້າ ), ໃນລາຄາຊອງລະ 300.000 ກີບ ( ສາມແສນກີບ ).

**+ ຕິດຕໍ່ພົວພັນ:**

ທ່ານ ນາງ ໄວສອນ ພິມມະສອນ 020 98318308 ແລະ ທ່ານ ສົມໄຊ ໄຊຍະສານ ໂທ 020 222 98810.

ດັ່ງນັ້ນ: ຈິ່ງແຈ້ງມາຍັງທ່ານຜູ້ທີ່ມີຄວາມສົນໃຈຮັບຊາບ.

**ຫົວໜ້າ**

**ພະແນກອຸດສາຫະກຳ ແລະ ການຄ້າ**

(ຄະນະກຳມະການປະມູນຊື້ - ຂາຍໄມ້ຢຶດຂັ້ນແຂວງ)

ພະແນກ ອຸດສາຫະກຳແລະການຄ້າ ແຂວງ ເຊກອງ

ພັນສອນ ແສນສົ່ງເສີມ
Phansone SAENSONGSEUM